 

# ນັກວິທຍາສາດກັບພຣະເຈົ້າ

ເພື່ອປ້ອງກັນການເຂົ້າໃຈຜິດຜູ້ຂຽນຈຶ່ງຂໍເນັ້ນວ່າຄວາມຮູ້ທາງວິທຍາສາດທີ່ແທ້ຈິງຈະບໍ່ຂັດແຍ່ງກັບຄວາມຈິງຂອງພຣະເຈົ້າ ເພາະທັ້ງສອງຝ່າຍນີ້ມາຈາກກົກເຄົ້າເຫງົ້າດຽວກັນ  ຄືມາຈາກພຣະເຈົ້າ. ຝ່າຍທຳອິດແມ່ນການຄົ້ນຄວ້າພາຣະກິດຂອງພຣະເຈົ້າ ແລະຝ່າຍທີສອງແມ່ນຄວາມຈິງທີ່ພຣະອົງຊົງເປີດເຜີຍໃຫ້ມະນຸດໄດ້ຮູ້ຈັກທາງພຣະຄັມພີ.  ດັ່ງນັ້ນຄວາມຈິງ ທັງສອງປະການນີ້ຈຶ່ງບໍ່ຂັດແຍ່ງກັນແລະຈະຂັດແຍ່ງກັນບໍ່ໄດ້.  ພຽງແຕ່ວ່າວິທີການນຳເຂົ້າໄປສູ່ຄວາມຈິງຂອງແຕ່ລະຝ່າຍນັ້ນບໍ່ເໝືອນກັນ ຫລືໃຊ້ວິທີການເພື່ອຈະນຳເຂົ້າໄປສູ່ຄວາມຈິງຄົນລະຢ່າງ.  ຝ່າຍນັກວິທຍາສາດພຍາຍາມຄົ້ນຄວ້າຫາຄວາມຈິງດ້ານທັມມະຊາດອັນເປັນພາຣະກິດຫລືສິພຣະຫັດຂອງພຣະເຈົ້າ  ດ້ວຍວິທີສະເພາະຂອງຕົນເອງ.  ອີກຝ່າຍນຶ່ງແມ່ນຄຣິສຕຽນໄດ້ພົບກັບຄວາມຈິງທາງດ້ານຈິດວິນຍານຕາມຫລັກການຂອງພຣະເຈົ້າ ທັງສອງຝ່າຍຈຶ່ງບໍ່ຄວນຂັດແຍ່ງກັນ ( ເວັ້ນແຕ່ວ່າຄວາມຮູ້ເຫລົ່ານັ້ນຂອງທາງວິທະຍາສາດ ເປັນແຕ່ພຽງຂໍ້ສັນນິຖານທີ່ຍັງບໍ່ທັນເປັນຄວາມຈິງທີ່ສົມບູນແລະຍັງປຽນແປງຕໍ່ໄປເລື້ອຍໆ ).  ເພື່ອຢືນຢັນເຖິງຄວາມຈິງຂໍ້ນີ້   ຈຶ່ງຂໍຍົກຕົວຢ່າງເພື່ອສະແດງໃຫ້ທ່ານເຫັນວ່າບຸກຄົນລະດັບໂລກ ທີ່ຄົນສ່ວນຫລາຍຍອມຮັບ ວ່າເຂົາເຈົ້າເປັນຄົນທີ່ມີເຫດຜົນແລະອາສັຍເຫດຜົນໃນການພິສູດສິ່ງຕ່າງໆ ເຂົາເຈົ້າມີທັສນະຫລືມີຄວາມຄິດໃນເຣື່ອງພຣະເຈົ້າຢ່າງໃດ  ຊຶ່ງຫຼາຍຄັ້ງຕຳຣາຮຽນທາງວິທຍາສາດເກືອບຈະບໍ່ເວົ້າເຖິງຊີວິດອີກດ້ານນຶ່ງ ຄືດ້ານຄວາມເຊື່ອຂອງເຂົາເຈົ້າເຫຼົ່ານີ້ເລີຍ.

ແອລເບີຣ໌ຕ ໄອຣ໌ສໄຕນ໌  Albert Einstein ( 1879-1955 )



ນັກວິທຍາສາດຊາວເຢັຽຣະມັນ ຜູ້ຄິດຄົ້ນທິສດີແຫ່ງຄວາມສຳພັນທະພາບກ່າວວ່າ ສາສນາຂອງຂ້າພະເຈົ້າປະກອບດ້ວຍການຍົກຍ້ອງຖ່ອມໃຈຕໍ່ອົງພຣະວິນຍານ ຊຶ່ງຍິ່ງໃຫຍ່ສູງສຸດ ບໍ່ອາດຈຳກັດໄດ້ ແລະພຣະອົງໄດ້ຊົງສຳແດງພຣະອົງເອງຢ່າງລະອຽດ ແມ່ນແຕ່ໃນສິ່ງເລັກນ້ອຍ ຊຶ່ງເຮົາສາມາດສຳນຶກໄດ້ດ້ວຍໃຈທີ່ອ່ອນແອແລະຄວາມບົກພ່ອງຂອງເຮົາ ຄວາມຄິດເຣື່ອງພຣະເຈົ້າຂອງຂ້າພະເຈົ້າເກີດຈາກຄວາມແນ່ໃຈອັນເລິກເຊິ່ງຝ່າຍຈິດວິນຍານ ເຖິງການຊົງພຣະຊົນຢູ່ຂອງພະລັງ, ຣິດເດດ, ແລະອຳນາດຂອງພຣະເຈົ້າອົງຍິ່ງໃຫຍ່ສູງສຸດ ແລະຂ້າພະເຈົ້າກໍຍັງຮູ້ເຫດແລະຜົນໄດ້.  ຊຶ່ງພະລັງ, ຣິດເດດ, ແລະອຳນາດນັ້ນໄດ້ສຳແດງພຣະອົງເອງໃນຈັກກະວານອັນສລັບຊັບຊ້ອນຂອງພຣະອົງ

ໂຣເບີຣ໌ຕ ບອຍລ໌ Robert Boyle ( 1627-1691)



ນັກວິທຍາສາຕຊາວໄອຣິດຊ໌ ຜູ້ໄດ້ຮັບສາຍານາມວ່າ  ບິດາແຫ່ງເຄມີ ໃນສມັຍປະຈຸບັນ ແລະເປັນຜູ້ຕັ້ງກົດຂອງບອຍລ໌  ໄດ້ກ່າວວ່າ ຄວາມດັນແລະປະຣິມານຂອງແກສເມື່ອຄູນກັນ ຍ່ອມໄດ້ຜົນຄົງທີ່ຖ້າຫາກອຸນນະພູມຄົງທີ່  ແຕ່ທ່ານຮູ້ບໍ່,  ເຖິງແມ່ນວ່າທ່ານບອຍລ໌ຈະມີຄວາມສລາດທາງວິທຍາສາດພຽງໃດກໍຕາມ ທ່ານກັບຂຽນຄວາມຮູ້ກ່ຽວກັບພຣະຄັມພີຫຼາຍກວ່າຄວາມຮູ້ທາງດ້ານວິທຍາສາດເສັຽອີກ ທ່ານເຄີຍບອກເຖິງຜົນງານຂອງທ່ານໄວ້ຄັ້ງນຶ່ງວ່າ  "ແຮງຈູງໃຈສຳຄັນທີ່ເຮັດໃຫ້ຂ້າພະເຈົ້າຫັນເຂົ້າສູ່ການຄົ້ນຄວ້າ ແລະການທົດລອງດ້ານວິທຍາສາດນັ້ນ ຂ້າພະເຈົ້າພຽງແຕ່ຢາກສະແດງໃຫ້ໂລກເຫັນເຖິງຄວາມສອດຄ່ອງຂອງພຣະຄຣິສຕະທັມຄັມພີກັບກົດຕ່າງໆ ທາງທັມມະຊາດ "ຍິ່ງໄປກວ່ານັ້ນທ່ານບອຍລ໌ຍັງເປັນບຸກຄົນທີ່ສົນໃຈສຶກສາພຣະຄັມພີຢ່າງເອົາຈິງ  ຈົນເຖິງກັບລົງທຶນຮຽນພາສາຮີບຣູ, ອາມາຣິດ, ແລະຊີເຣັຽ ເພື່ອຈະສາມາດເຂົ້າໃຈພຣະຄຳຂອງພຣະເຈົ້າຢ່າງເລິກເຊິ່ງ.

ເຊີຣ໌ ໄອແຊັກ ນິວຕັນ Sir. Isac Newton ( 1642-1727 )



ຜູ້ທີ່ໂລກຍອມຮັບວ່າເປັນນັກວິທຍາສາດເອກຂອງໂລກຢ່າງແທ້ຈິງ ເພາະທ່ານເປັນຜູ້ພັທນາວິຊາດ້ານແຄລຄູລັສ ເປັນຜູ້ຮວບຮວມທິສດີກ່ຽວກັບການເຄື່ອນທີ່ ( Motion ) ເຂົ້າໄປໃນຣະບົບດຽວກັນ ແລະເປັນຜູ້ຕັ້ງທິສດີ ແຮງໂນ້ມຖ່ວງຂອງໂລກ ຜົນງານຂອງທ່ານມີຫລວງຫຼາຍຈົນທ່ານໄດ້ຮັບພຣະຣາຊທານກຽດຕິຍົດຊັ້ນສູງເປັນທ່ານ ຫລື ເຊີຣ໌ ຂອງຈັກກະພັດອັງກິດ.

ແຕ່ທ່ານເຊື່ອບໍ່ວ່າ ທ່ານນິວຕັນໄດ້ອະທິບາຍກ່ຽວກັບຄວາມຮູ້ທາງວິທຍາສາດ ຊຶ່ງຖ້າຄໍານວນຄິດໄລ່ເປັນຖ້ອຍຄໍາແລ້ວຈະເທົ່າກັບ 1 ລ້ານຄໍາ ແຕ່ໃນຂະນະດຽວກັນທ່ານໄດ້ຂຽນກ່ຽວກັບພຣະເຈົ້າເຖິງ 1.4 ລ້ານຄໍາ ຈຶ່ງເຫັນວ່າທ່ານແມ່ນຜູ້ນຶ່ງທີ່ມີຄວາມຮັກແລະສັດທາຕໍ່ພຣະເຈົ້າຢ່າງເລິກເຊິ່ງ ຊຶ່ງເປັນທີ່ຊາບກັນຢ່າງກວ້າງຂວາງ.

ກາລິເລໂອ Galileo Galilei ( 1564-1642 )



ນັກຄະນິດສາດແລະຟີຊິກ ທີ່ຍິ່ງໃຫຍ່ຂອງໂລກ ເປັນຜູ້ຄິດຄົ້ນກ້ອງໂທຣທັດຂຶ້ນເປັນຄົນທໍາອິດ ແຕ່ສິ່ງນຶ່ງທີ່ນັກວິທຍາສາດແລະນັກປະວັດສາດບໍ່ໄດ້ກ່າວເຖິງທ່ານຜູ້ນີ້ກໍຄືທ່ານເປັນນັກສຶກສາພຣະຄຣິສຕະທັມຄັມພີຕົວເອກ ທ່ານຂຽນໜັງສືອະທິບາຍຄວາມຮູ້ເຣື່ອງຈັກກະວານຫຼາຍຮ້ອຍໜ້າໂດຍອ້າງອີງຈາກພຣະຄຣິສຕະທັມຄັມພີ ຂໍ້ຄວາມຕອນນຶ່ງທ່ານກ່າວໄວ້ວ່າ ພຣະຄັມພີແລະທັມມະຊາດເປັນຜົນໂດຍກົງຈາກພຣະຄໍາຂອງພຣະເຈົ້າ ສິ່ງທໍາອິດເກີດຂຶ້ນຍ້ອນການບັນດົນຈາກພຣະວິນຍານບໍຣິສຸດ ແລະສິ່ງທີສອງເກີດຂຶ້ນຈາກການເຊື່ອຟັງຂອງທັມມະຊາດທີ່ເຊື່ອຟັງຄໍາສັ່ງຂອງພຣະອົງ ( ເພື່ອໃຫ້ມີຄວາມກະຈ່າງແຈ້ງຜູ້ຂຽນຂໍຍົກຕົວຢ່າງຈາກການນິຣະມິດສ້າງຂອງພຣະເຈົ້າໃນໜັງສືປະຖົມມະການຕອນນຶ່ງ ) ພຣະເຈົ້າຊົງສັ່ງວ່າ ໃຫ້ມີດວງແຈ້ງໃນທ້ອງຟ້າ ແຍກກາງເວັນແລະກາງຄືນ ແລະໃຫ້ກໍານົດເວລາຂອງມື້ ຂອງປີ ແລະຂອງລະດູການພ້ອມທັງສົ່ງແສງລົງມາເທິງແຜ່ນດິນໂລກ ແລ້ວສິ່ງນັ້ນກໍເກີດມາ ( ປະຖົມມະການ 1 ຂໍ້ 14-15 )

ຈອນຫ໌ ເຄພເລີຣ໌ Johannes Kepler ( 1571-1630 )



ນັກດາຣາສາດທີ່ຍິ່ງໃຫຍ່ຂອງທຸກຍຸກທຸກສມັຍ ເປັນຜູ້ຕັ້ງກົດສໍາຄັນກ່ຽວກັບການໂຄຈອນຂອງດວງດາວຕ່າງໆ ໃນຫ້ວງອາວະກາດ ຄັ້ງນຶ່ງທ່ານສັງເກດບາງຢ່າງທີ່ສາມາດອະທິບາຍເຖິງປາກົດການຂອງດວງດາວຕ່າງໆ ໃນສະພາບທີ່ວ່ານີ້ ແຕ່ບໍ່ຮູ້ວ່າຫລັກການນັ້ນຄືຫຍັງ ຈົນກະທັ້ງວັນນຶ່ງໃນຂນະທີ່ທ່ານນັ່ງອ່ານພຣະຄັມພີປະຈໍາວັນຢູ່ ທ່ານພົບຂໍ້ຄວາມຕອນນຶ່ງຂອງພຣະເຢຊູຄຣິດທີ່ຊົງກ່າວວ່າ ຝ່າຍເຮົາເມື່ອຖືກຍົກຂຶ້ນຈາກແຜ່ນດິນໂລກ ( ຖືກຄຶງເທິງໄມ້ກາງແຂນ ) ແລ້ວ ເຮົາຈະຊັກນໍາຄົນທັງຫລາຍມາຫາເຮົາ ໃນທັນໃດນັ້ນທ່ານເກີດຄວາມຄິດນຶ່ງຂຶ້ນມາວ່າ ມີທາງເປັນໄປໄດ້ທີ່ດວງດາວຕ່າງໆ ດຶງດູດຊຶ່ງກັນແລະກັນໃນຫ້ວງອາວະກາດ ທີ່ເໝືອນກັບຄໍາສອນທາງດ້ານຈິດວິນຍານກ່ຽວກັບພຣະເຢຊູຄຣິດທີ່ສາມາດດຶງດູດຄົນຈໍານວນຫລວງຫລາຍມາຫາພຣະອົງ ຈຶ່ງສົ່ງຜົນໃຫ້ທ່ານຕັ້ງກົດຕ່າງໆ ວ່າດ້ວຍການໂຄຈອນຂອງດວງດາວຂຶ້ນ ກ່ອນທີ່ທ່ານຈະເຖິງແກ່ຄວາມຕາຍ ທ່ານເຄພເລີຣໄດ້ຂຽນຕໍາຣາວ່າດ້ວຍເຫດຜົນເພື່ອສນັບສນູນເຖິງຄວາມໜ້າເຊື່ອຖືຂອງພຣະຄັມພີວ່າເປັນ "ພຣະຄໍາຂອງພຣະເຈົ້າ."

ໄມເຄີລ ຟາຣາເດຍ໌ Michael Faraday ( 1791-1867 )



ນັກວິທຍາສາດທີ່ຄົ້ນພົບຫລັກຂອງກະແສໄຟຟ້າຊຶ່ງກ່າວວ່າ ເມື່ອເອົາໄຟຟ້າໃສ່ໃນນໍ້າຢາ ເຊັ່ນໃນການຊຸບຫລືຫລໍ່ທອງຄໍາ ໂລຫະທີ່ຈັບຂວັ້ນບວກຈະຫຼາຍຫຼືນ້ອຍຂຶ້ນຢູ່ກັບຈໍານວນກະແສໄຟຟ້າ ແລະທ່ານເປັນຄົນແລກທີ່ອະທິບາຍເຖິງພະລັງຂອງສນາມແມ່ເຫລັກໄຟຟ້າ. ແຕ່ສິ່ງນຶ່ງຊຶ່ງຫນ້ອຍຄົນຮູ້ຈັກກ່ຽວກັບທ່ານຜູ້ນີ້ຄື ທ່ານເປັນນັກເທດຄາຣະວາດຜູ້ປະກາດຂ່າວປະເສີດຂອງພຣະເຢຊູຄຣິດເຈົ້າທຸກອາທິດ ໃນໂບດນ້ອຍໆ ແຫ່ງໜຶ່ງໃນກຸງລອນດອນ ຊຶ່ງໃນປັດຈຸບັນນີ້ຄໍາເທສນາຂອງທ່ານຟາຣາເດຍ໌ປະມານ 150 ເຣື່ອງຊຶ່ງບໍ່ໄດ້ຕີພິມເຜີຍແຜ່ ຍັງຖືກເກັບຮັກສາໄວ້ເປັນຢ່າງດີໃນປະເທດອັງກິດ ທ່ານເປັນນັກວິທຍາສາດອີກຜູ້ນຶ່ງທີ່ມີຄວາມສັດທາໃນພຣະເຈົ້າຢ່າງແທ້ຈິງ

ທີ່ກ່າວມານັ້ນເປັນພຽງຕົວຢ່າງເພື່ອຊີ້ໃຫ້ເຫັນວ່າຄວາມຮູ້ທາງດ້ານວິທຍາສາດ ບໍ່ໄດ້ຂັດແຍ່ງກັບຄວາມເຊື່ອໃນພຣະເຈົ້າເລີຍ ເພາະຜູ້ທີ່ຍິ່ງສຶກສາກ່ຽວກັບວິທຍາສາດຫຼາຍເທົ່າໃດ ກໍຍິ່ງເຮັດໃຫ້ລາວເຫັນຄວາມຍິ່ງໃຫຍ່ແລະຄວາມມະຫັສຈັນແຫ່ງການນິຣະມິດສ້າງຂອງອົງພຣະຜູ້ເປັນເຈົ້າຫຼາຍຍິ່ງຂຶ້ນ ແມ່ນແຕ່ໃນປັດຈຸບັນນີ້ບຸກຄົນລະດັບໂລກເກືອບທຸກສາຂາວິຊາປະກອບດ້ວຍບຸກຄົນທີ່ເປັນຄຣິສຕະຊົນ ຊຶ່ງມີຄວາມຮັກ ແລະຄວາມສັດທາຕໍ່ພຣະເຈົ້າດ້ວຍຄວາມຈິງໃຈ ແລະຂໍກ່າວເນັ້ນຂໍ້ເທັດຈິງທີ່ສໍາຄັນອີກປະການນຶ່ງ ຊຶ່ງຕໍາຣາທາງວິທະຍາສາດຈະບໍ່ກ່າວເຖິງເລີຍນັ້ນກໍຄືແຮງຜັກດັນສູ່ຄວາມຈິງຂອງການສຶກສາໃນສມັຍປັດຈຸບັນນີ້ ເລີ້ມຕົ້ນຈາກຄວາມນຶກຄິດ (Concept ) ໃນເຣື່ອງຂອງພຣະເຈົ້າມາກ່ອນສິ່ງອື່ນ ເພາະກຸ່ມນັກວິທະຍາສາດທີ່ຊ່ວຍເປີດສັກຣາດໃຫມ່ໃຫ້ແກ່ການສຶກສາວິທະຍາສາດສມັຍປັດຈຸບັນນີ້ ( ດັ່ງທີ່ໄດ້ຍົກຕົວຢ່າງມາແລ້ວ ) ໄດ້ເລີ້ມຕົ້ນການສຶກສາຂອງເຂົາເຈົ້າເທິງຫລັກການສັນນິຖານທີ່ວ່າ ຈັກກະວານນີ້ມີເຫດຜົນ ເພາະວ່າຢູ່ເບື້ອງຫລັງນັ້ນແມ່ນພຣະເຈົ້າຜູ້ຊົງມີເຫດຜົນ ເພາະສະນັ້ນເຮົາຈິ່ງສາມາດໃຊ້ເຫດຜົນເຂົ້າໄປສູ່ການສຶກສາຂໍ້ເທັດຈິງເຫຼົ່ານັ້ນ ຫລັກສັນນິຖານອັນນີ້ສໍາຄັນຫຼາຍ ບໍ່ດັ່ງນັ້ນແລ້ວກໍເຫຼືອວິສັຍວ່າ ມະນຸດຈະຄິດຄົ້ນຢ່າງໃດໃຫ້ເປັນກົດເກນຂຶ້ນມາໄດ້ ເຫດຜົນນັ້ນຄືອັນໃດ ເຮົາມີລັກຖານອັນໃດທີ່ຈະຢືນຢັນເຖິງການຊົງພຣະຊົນຢູ່ຂອງພຣະເຈົ້າວ່າພຣະເຈົ້າມີຈິງ. ຂໍເຊີນທ່ານສຶກສາຄົ້ນຄວ້າຕໍ່ໄປຈາກບົດຮຽນແລະອຸປກອນຕ່າງທີ່ພວກເຮົາມີ ທາງອິນເຕີແນັດນີ້. ຈະເປັນການດີຖ້າຫາກທ່ານຍອມເສັຽສລະເວລາອັນມີຄ່າຂອງທ່ານ ເພື່ອແລກເອົາຊັບອັນລໍ້າຄ່າກວ່າສິ່ງອື່ນໃດໃນໂລກນີ້ ດ້ວຍການໄປຢ້ຽມຢາມວິຫານ ຫຼືຄຣິສຕະຈັກ ຫຼືໂບດ ໃນບ້ານຫຼືຄຸ້ມເຂດທີ່ທ່ານອາສັຍຢູ່ ພວກເຮົາແນ່ໃຈວ່າທ່ານຄົງໄດ້ຮັບຄໍາຕອບດ້ວຍຄວາມເພິ່ງພໍໃຈຢ່າງແນ່ນອນ.

( ຮຽບຮຽງຈາກ "ຂ່າວດີ" ສີ່ມວນຊົນບັບຕິສ )

ຂໍພຣະເຈົ້າຊົງອວຍພຣະພອນແກ່ທ່ານ
ລາວບັບຕິສສັມພັນ